# ເຄື່ອງມືດິຈິຕອນ ສຳລັບການສ້າງຄວາມຮັບຮູ້ ກ່ຽວກັບສິ່ງແວດລ້ອມ



ສົ່ງເສີມຄວາມຮູ້, ປົກປ້ອງໂລກຂອງເຮົາ



# ເປັນຫຍັງຄວາມຮັບຮູ້ທາງດ້ານສິ່ງແວດລ້ອມຈຶ່ງສຳຄັນໃນ ສປປ ລາວ?



ປະເທດລາວນັ້ນພົບພໍ້ກັບສິ່ງທ້າທາຍດ້ານສິ່ງແວດລ້ອມທີ່ສຳຄັນຫຼາຍຢ່າງ ລວມທັງການຕັດໄມ້ທຳລາຍປ່າ, ນ້ຳຖ້ວມ, ແລະ ສະພາບອາກາດທີ່ປ່ຽນແປງຮຸນແຮງ.



ປະຊາຊົນສ່ວນຫຼາຍໃນປະເທດລາວອາໄສທຳມະຊາດສຳລັບການກະເສດ ແລະ ອາຫານການກິນ, ດັ່ງນັ້ນການປົກປ້ອງສິ່ງແວດລ້ອມແມ່ນສິ່ງສຳຄັນ.



ເຄື່ອງມືດິຈິຕອນສາມາດຊ່ວຍເຜີຍແຜ່ຂໍ້ມູນ, ສ້າງຄວາມຮັບຮູ້,
ແລະປູກຈິດສຳນຶກໃນການຕໍ່ສູ້ກັບການປ່ຽນແປງດິນຟ້າອາກາດ.

# ເຄື່ອງມືດິຈິຕອນ ແລະ ບັນຫາສິ່ງແວດລ້ອມ

ເຕັກໂນໂລຊີດິຈິຕອນໄດ້ປ່ຽນແປງວິທີການເຜີຍແຜ່ຂໍ້ມູນ ແລະ ການດຳເນີນງານກ່ຽວກັບການປ່ຽນແປງດິນຟ້າອາກາດ ແລະ ສິ່ງແວດລ້ອມ.

- **ສື່ສັງຄົມອອນລາຍ**
- **ປຸກລະດົມຜ່ານອອນລາຍ**
- **ເຄື່ອງມືປັນຍາປະດິດ (AI)**

ເຄື່ອງມືເຫຼົ່ານີ້ຊ່ວຍໃຫ້ຄົນໄດ້ຮຽນຮູ້ ແລະ ສົ່ງເສີມຄວາມພະຍາຍາມເພື່ອຄວາມຍືນຍົງ.



# ເຈົ້າສາມາດໃຊ້ເຄື່ອງມືເຫຼົ່ານີ້
# ໄດ້ແນວໃດ?



# ເຄື່ອງມືດິຈິຕອນສຳລັບການສ້າງຄວາມຮູ້

**ສື່ສັງຄົມອອນລາຍ**

ເຜີຍແຜ່ຂ່າວສານດ້ານສິ່ງແວດລ້ອມໄດ້ໄວ.

**ເວັບໄຊ**

ສອນໃຫ້ຄົນເຮົາຮູ້ກ່ຽວກັບບັນຫາສິ່ງແວດລ້ອມ.

**ແອັບມືຖື ແລະ ຊຸມຊົນອອນລາຍ**

ເຮັດໃຫ້ຄົນສາມາດປະຕິບັດໄດ້, ເລີ່ມຈາກການຫຼຸດຜ່ອນປະລິມານການປ່ອຍຄາບອນໄດອອກຊາຍ

ໄປຈົນເຖິງການສົ່ງເສີມການອະນຸລັກ.

# ການປະຕິບັດທາງອອນລາຍ!




**ສົ່ງໃສ່ໃນ Facebook, TikTok, ແລະ YouTube.**

ມັນເປັນເຄື່ອງມືທີ່ດີໃນການ ເຜີຍແຜ່ຂ່າວສານ ແລະ ເຄັດລັບຕ່າງໆ ດ້ານສິ່ງແວດລ້ອມ



**ເພີ່ມ hashtag ເຊັ່ນ #SaveLaosForests, #EcoLaos, ແລະ #ProtectTheMekong.**

ເພື່ອຊ່ວຍປົກປ້ອງປ່າໄມ້ລາວ ທຳມະຊາດສີຂຽວ ແລະ ສະພາບ ອາກາດລຸ່ມແມ່ນ້ຳຂອງ



**ສ້າງວິດີໂອສັ້ນ ແລະ ອິນໂຟ ກາຟິກ.**

ສິ່ງເຫຼົ່ານີ້ເຮັດໃຫ້ບັນຫາ ສິ່ງແວດລ້ອມເຂົ້າໃຈງ່າຍ ແລະ ສາມາດແບ່ງປັນໃຫ້ໝູ່ເພື່ອນໄດ້.

# ເວັບໄຊສຳລັບການຮຽນຮູ້ອອນລາຍແລະຂໍ້ມູນຂ່າວສານ

**ເຂົ້າຮຽນຮູ້ ແລະ ຍົກລະດັບຄວາມຮູ້ຂອງເຈົ້າກ່ຽວກັບບັນຫາສິ່ງແວດລ້ອມ**
**ໂດຍເຂົ້າເບິ່ງເວັບໄຊທີ່ມີຂໍ້ມູນໜ້າເຊື່ອຖື**
**ກ່ຽວກັບການປ່ຽນແປງດິນຟ້າອາກາດ ແລະ ບັນຫາສິ່ງແວດລ້ອມໄດ້ດັ່ງນີ້:**

Climate Change Knowledge Portal - World Bank

Thailand Environment Institute (Thai)

Wildlife Conservation Society (English) – Laos

The Center for People and Forests Laos (English/Lao)

Open Development Laos (Lao)



# ລົງມືປະຕິບັດ ແລະ ເຜີຍແຜ່ຂ່າວສານ!

ໃຊ້ຮູບແບບສື່ດິຈິຕອນທີ່ເຈົ້າມັກເປັນຕົ້ນ – YouTube, TikTok, Facebook, WhatsApp, ແລະ ອື່ນໆ – ເພື່ອແຈ້ງບອກໃຫ້ຜູ້ອື່ນຮູ້ກ່ຽວກັບການປ່ຽນແປງດິນຟ້າອາກາດ ແລະ ຄວາມສຳຄັນຂອງການປົກປັກຮັກສາສິ່ງແວດລ້ອມ.

ຫາກວ່າຜູ້ຄົນຮູ້ຫຼາຍເທົ່າໃດ, ພວກເຂົາກໍ່ຍິ່ງສາມາດເຮັດຫຍັງບາງຢ່າງໄດ້ຫຼາຍຂຶ້ນປົກປ້ອງໂລກຂອງເຮົາໃຫ້ລູກໃຫ້ຫຼານລຸ້ນຕໍ່ໄປ.



ສຳຫຼວດບົດຮຽນທີ່ເຫຼືອ
ເພື່ອຮຽນຮູ້ການສ້າງເນື້ອໃນ
ທີ່ໃຫ້ຄວາມຮູ້
ແລະ ສ້າງແຮງບັນດານໃຈ.

